ປຶ້ມຊຸດ "ບຸກຄົນທີ່ໂລກບໍ່ຄວນລືມ" ຈາກ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແຫ່ງປະເທດຍີ່ປຸ່ນ

# ມະຫາຕະມາ ຄານທີ

## ຊີວິດ ແລະ ຄຳຄົມ



ສະມາຄົມ ຮ່ວມນ້ຳໃຈກັບເດັກນ້ອຍລາວ
Action with Lao Children

# ມະຫາຕະມາຄານທີ



## ຊີວິດ ແລະຄຳຄົມ

# ມະຫາຕະມາຄານທີ

## ຊີວິດ ແລະຄຳຄົມ

ແປ ແລະຮຽບຮຽງ: ໂອທອງ ຄຳອິນຊູ

ບັນນາທິການ: ດວງເດືອນ ບຸນຍາວົງ ແລະ ດາລາ ກັນລະຍາ

ຈັດໜ້າ ແລະອອກແບບປົກ: ບໍລິສັດ ດອກເກດ ການພິມ ຈຳກັດຜູ້ດຽວ

ຈັດພິມໂດຍ:
ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ

ອຸປະຖຳໂດຍ

Canon

CANON INC. (2,500 ຫົວ)

ທະບຽນພິມເລກທີ: ລອພ 97/ພຈ 24032003

ພິມທີ່ໂຮງພິມ ຈຳປາການພິມ

ຈຳນວນ 13,000 ຫົວ

ນະຄອນຫລວງວຽງຈັນ ສ.ປ.ປ. ລາວ

2006

# ຄຳສະເໜີ

ຄານທີແມ່ນໃຜ ? ມີຄວາມສຳຄັນຢ່າງໃດ ຈຶ່ງເປັນຄົນສຳຄັນຂອງໂລກນັ້ນ ຂໍຍົກເອົາຄຳເວົ້າສັ້ນໆ ຂອງທ່ານ ອານເບີກຣ໌ແອງຊະແຕັງ (Albert Einstein) ນັກວິທະຍາສາດ ຜູ້ສຳຄັນຄົນໜຶ່ງຂອງໂລກ ທີ່ກ່າວເຖິງເພິ່ນ:

"...ອາດເປັນໄປໄດ້ ທີ່ໃນຍຸກຕໍ່ໄປ ຈະບໍ່ມີໃຜຢາກເຊື່ອວ່າ ບຸກຄົນແບບນີ້ກໍເຄີຍມີຊີວິດ ຊີວາຢ່າງເດີນເຫີນຢູ່ບົນພື້ນແຜ່ນດິນນີ້ມາແລ້ວ ......"

ປື້ມອ່ານກ່ຽວກັບບຸກຄົນສຳຄັນຂອງໂລກກໍຄື: "ບຸກຄົນທີ່ໂລກບໍ່ຄວນລືມ" ແມ່ນປື້ມອ່ານຊຸດໃໝ່ ທີ່ທາງສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແຫ່ງປະເທດຍີ່ປຸ່ນ ມີແຜນຈັດພິມ ໃນຂັ້ນຕໍ່ໄປ. ທັງນີ້ໂດຍເຫັນວ່າ ການຮູ້ຈັກຊີວິດຂອງບຸກຄົນ ຜູ້ກະທຳຄຸນງາມຄວາມ

ດີຕໍ່ມວນມະນຸດ ກໍຄືເພື່ອນ ຮ່ວມຊາດ ຫລື ຜູ້ສ້າງຜົນງານທີ່ມີຄຸນຄ່າທາງ ດ້ານຈິດໃຈ ຫລື ວັດຖຸກໍຕາມ ຈະໃຫ້ບົດຮຽນອັນດີງາມແກ່ຄົນຮຸ່ນໃໝ່ ເປັນກຳລັງໃຈໃຫ້ ແກ່ຜູ້ທີ່ ພວມຕໍ່ສູ້ໃນເສັ້ນທາງ ແຫ່ງສັນຕິພາບ ແລະຄວາມດີງາມອື່ນໆ.

ເນື່ອງຈາກວ່າ ພວກເຮົາຂາດເອັບເອກະສານພາສາລາວໃນເລື່ອງນີ້ພໍສົມຄວນ ທາງສະມາຄົມຈຶ່ງນຳໃຊ້ປື້ມພາສາໄທ ທີ່ແປໂດຍອາຈານ ກະຣຸນາ ແລະ ອາຈານ ເຣືອງອຸໄຣ ກຸສະລາໄສ ທີ່ເປັນຜູ້ຊຳນານ ໃນການແປ ຜົນງານທັງຫລາຍກ່ຽວກັບ ທ່ານ "ຄານທີ" ທັງເປັນຜູ້ມີຄວາມຮູ້ເລິກເຊິ່ງດ້ານພາສາອັງກິດ ແລະຄຳເວົ້າທີ່ໃຊ້ໃນຜົນງານ ຂອງທ່ານ ຄານທີ. ໂດຍໄດ້ຮັບຄຳອະນຸຍາດຈາກທາງສຳນັກພິມ ທີ່ກ່ຽວຂ້ອງ ທີ່ເຫັນວ່າການຈັດພິມຂອງພວກເຮົາບໍ່ແມ່ນເພື່ອການທຸລະກິດ ທາງສຳນັກພິມຈຶ່ງຍິນດີອະນຸຍາດຈຶ່ງຂໍຂອບໃຈມານະທີ່ນີ້ ເປັນຢ່າງສູງດ້ວຍ.

ປື້ມນ້ອຍຫົວນີ້ ນຳສະເໜີຊີວິດການເຄື່ອນໄຫວສ່ວນໜຶ່ງຂອງທ່ານ ແລະຄຳເວົ້າ ຄວາມຄິດທີ່ໄດ້ຊື່ວ່າເປັນ ອຳມະຕະວາຈາ ຫລື

ສິ່ງທີ່ ຕາຍບໍ່ເປັນ ຂອງທ່ານ ຄານທີ ເຊິ່ງເກັບກຳ ທ້ອນຈາກຄຳປາໄສ ຫລື ບົດຂຽນຕ່າງໆຂອງທ່ານ ຕະຫລອດຊີວິດການເຮັດວຽກອັນຍາວນານຂອງເພິ່ນ. ທ່ານຜູ້ອ່ານຈະພົບວ່າ ອຸດົມການອັນສູງສົ່ງ ວິດງາມຂອງທ່ານຄານທີ ໄດ້ກໍ່ເກີດຂຶ້ນຈາກການອ່ານປຶ້ມ ຄຳສອນສາສະໜາ ເຊັ່ນ: ພະຄະວັດຄີຕາ (ຄຳພີສັກສິດຂອງ ສາສະໜາ ຮິນດູ ຫລື ພຣາມ) ພຸດທະປະຫວັດ: ປະທີບແຫ່ງເອເຊຍ. ແລະ ນັກປັດຊະຍາ ນັກຂຽນ ນັກຄິດຫລາຍຊາດຫລາຍພາສາ ເຊັ່ນ: ຣັດເຊຍ ອາເມຣິກາ ອາຣັບ ແລະອື່ນໆ ເຫັນໄດ້ວ່າ ບົດຮຽນຈາກການອ່ານຂອງທ່ານ ເປັນຕົວຢ່າງດີເດັ່ນໜຶ່ງ ເປັນກຳລັງກະຕຸ້ນໃຫ້ພວກເຮົາ ຕ້ອງຄຳນຶງເຖິງການເລືອກເຟັ້ນສິ່ງອ່ານ ແລະ ວິທີການອ່ານຢ່າງມີປະສິດທິພາບ ແລະເໝາະກັບຕົນເອງ.

ຊີວິດຂອງທ່ານ ຄານທີ ເປັນຕົວຢ່າງອັນປະເສີດ ໃນທຸກໆດ້ານ ບໍ່ວ່າການຄອງເຮືອນມີຄູ່ຊີວິດ ເພິ່ນຖືວ່າ ຄວາມຊື່ສັດ ລະຫວ່າງຜົວເມຍ ແມ່ນຂອງຂວັນລ້ຳຄ່າ ທີ່ຍິງຊາຍຄວນມີໃຫ້ກັນ ແລະກັນ ທັງໆທີ່ວ່າໃນສະໄໝນັ້ນ ຜູ້ຊາຍໃນອິນເດຍ ໂດຍທົ່ວໄປ ບໍ່ໄດ້ຄຳນຶງເຖິງ

ຄວາມສຳຄັນ ຕໍ່ກັບບິດບາດຂອງແມ່ຍິງຜູ້ເປັນເມຽໃນຄອບຄົວເທື່ອ. ທ່ານຄານທີ ໃຫ້ກຽດຄູ່ຊີວິດຂອງເພິ່ນຕະຫລອດເວລາ ອັນຍາວນານ ແຫ່ງການຮ່ວມຊີວິດ.

ວາລະສຸດທ້າຍ ອັນໜ້າສະເທືອນໃຈ ຂອງທ່ານຄານທີ ກໍເປັນ ອຸທາຫອນສຳຄັນໜຶ່ງ ທີ່ມວນມະນຸດບໍ່ອາດຫລົງລືມໄດ້ ບໍ່ຕ່າງ ຫຍັງກັບພະພຸດທະອົງທີ່ໄດ້ຊົງສະຫລະທຸກຢ່າງ ເພື່ອໃຫ້ມວນມະ ນຸດຫລຸດພົ້ນ ຈາກຄວາມທຸກທໍລະມານ ແລະຢູ່ຮ່ວມກັນຢ່າງສັນຕິ. ທ້າຍທີ່ສຸດ ທ່ານຄານທີ ສະຫລະແມ່ນແຕ່ຊີວິດ ເພື່ອໃຫ້ອິນເດຍ ກໍຄືຊາວອິນເດຍ ຫລຸດພົ້ນອອກຈາກພາວະແອກກົດຂີ່ ຂອງຈັກ ກະພັດອັງກິດ. ພາຍຫລັງການເສຍຊີວິດ ຂອງຄານທີ (ເດືອນ ມັງກອນ 1948) ບໍ່ເຖິງປີ ອັງກິດກໍຍອມຄືນເອກະລາດໃຫ້ອິນເດຍ (ວັນທີ 14 ສິງຫາ 1948) ໂດຍບໍ່ມີການນອງເລືອດ.

ໃນວາລະຄົບຮອບ ມື້ຄ້າຍວັນເກີດ 100 ປີຂອງທ່ານ ຄານທີ ເມື່ອປີ 1969 ອົງການຢູແນສໂກ ຫລື ສະຫະປະຊາຊາດ ເພື່ອການສຶກສາ ວິທະຍາສາດ ແລະວັດທະນະທຳ ໄດ້ສະເໜີໃຫ້

ບັນດາປະເທດສະມາຊິກ ຈັດພິມ ເຜີຍແຜ່ຜົນງານການຂຽນຂອງເພິ່ນ ແລະນຳເອົາຜົນງານດັ່ງກ່າວ ເຂົ້າສິດສອນໃນລະດັບວິທະຍາໄລ ແລະມະຫາວິທະຍາໄລ.

ຫວັງຢ່າງຍິ່ງວ່າ ປື້ມຊີວະປະຫວັດໂດຍຫຍໍ້ ແລະຄຳຄົມຄຳເວົ້າຂອງທ່ານທີ່ວນີ້ ຈະຢູ່ຄຽງຂ້າງເປັນແວ່ນແຍງ ໃຫ້ແກ່ນັກອ່ານຊາວໜຸ່ມ ໄວຮຽນ ນັກສຶກສາ ນັກຄົ້ນຄວ້າ ຕະຫລອດທ່ານຜູ້ອ່ານທົ່ວໄປຜູ້ກຳລັງປະຕິບັດ ໜ້າທີ່ພັນທະຂອງຕົນ ຕໍ່ຊາດກໍຄືຕໍ່ແຜ່ນດິນເກີດ ອີກທັງຈະຊ່ອຍໃຫ້ເຂົ້າເຖິງຊີວິດຈິດໃຈ ຂອງມະຫາບຸລຸດຄົນນີ້ຜູ້ເຄີຍເປັນ ແລະຍັງຈະເປັນແບບຢ່າງ ແກ່ຄົນຮຸ່ນໃໝ່ ສືບຕໍ່ໄປ.

ວຽງຈັນ ສິງຫາ 2006

ຄະນະບັນນາທິການ A.L.C.

# ຄຳສະຫນີ ຂອງອົງການຄະເວກເກີ

ອົງການ ຄະເວກເກີ ປະຈຳ ສ.ປ.ປ. ລາວ (QUAKER SERVICE LAOS) ເປັນຫນ່ວຍງານຫນຶ່ງທີ່ໄດ້ ມີສ່ວນຮ່ວມໃນໂຄງການພັດທະນາສັງຄົມຢູ່ໃນ ສ.ປ.ປ.ລາວ ມາເປັນເວລາຫລາຍສິບປີ ແລະໃນລະຍະຫລັງໆມານີ້ ໄດ້ສຸມໃສ່ເລື່ອງການຮັກສາຄວາມສະຫງົບສຸກພາຍໃນຄອບຄົວ ສັງຄົມ ຊຸມຊົນ. ຄວາມເຂົ້າໃຈພື້ນຖານໃນຄຳວ່າ ສະຫງົບສຸກຈຶ່ງແມ່ນປັດໄຈສຳຄັນຫນຶ່ງສຳລັບໄວຫນຸ່ມອາສາສະຫມັກຜູ້ປະກອບອາຊີບ ເຮັດວຽກງານຢູ່ໃນຫລາຍຂົງເຂດທົ່ວ ສ.ປ.ປ. ລາວ. ການກະທຳອັນເປັນແບບຢ່າງດີເດັ່ນໃນໂລກ ກ່ຽວກັບເລື່ອງຍຸດທະວິທີຕໍ່ສູ້ເພື່ອເອກະລາດຂອງຊາດ ດ້ວຍວິທີສັນຕິ ແມ່ນ ຊີວິດການຕໍ່ສູ້ ຂອງທ່ານມະຫາຕະມາ ຄານທີ ຢູ່ ອິນເດຽ ເມື່ອຕົ້ນຄິດຕະສະຕະວັດທີຊາວ.

ມີການຄົ້ນຄວ້າ ສຶກສາກ່ຽວກັບການຕໍ່ສູ້ ແບບສັນຕິວິທີ

24/VII
ຫ້າມຈຳໜ່າຍ

ຫລື ການບໍ່ໃຊ້ຄວາມຮຸນແຮງຂອງທ່ານຄານທີ ຢ່າງກວ້າງຂວາງ ແລະ ມີປຶ້ມຂຽນຫລາຍຫົວ ທັງທີ່ເປັນຜົນງານຂອງທ່ານເອງ ແລະນັກຄົ້ນຄວ້າອື່ນໆ ແປອອກເປັນພາສາຕ່າງໆຈຳຫນ່າຍໃນທົ່ວໂລກ ບາງເຫລັ້ມ ກາຍເປັນຕຳລາຄູ່ມືການສອນວິຊາປັດຊະຍາ ສັງຄົມສຶກສາ ໃນມະຫາວິທະຍາໄລໃນຫລາຍປະເທດ ຫລາຍບົດຕອນ ຖືກເລືອກໄວ້ໃຫ້ອ່ານ ແຕ່ທີ່ແນ່ນອນທີ່ສຸດ ກໍແມ່ນ ທຸກຜູ້ທຸກຄົນ ທີ່ສົນໃຈສຶກສາເລື່ອງຫລັກການອະຫິງສາ ຫລືການບໍ່ໃຊ້ຄວາມຮຸນແຮງ ກໍລ້ວນແຕ່ໄດ້ອ່ານປຶ້ມກ່ຽວກັບ ທ່ານຄານທີ ຫລື ຜູ້ທີ່ບໍ່ທັນຮູ້ຫຍັງກ່ຽວກັບສັນຕິວິທີ ເມື່ອໄດ້ອ່ານເລື່ອງຊີວິດຂອງທ່ານແລ້ວ ກໍເກີດແຮງຈູງໃຈໄປສູ່ເສັ້ນທາງແຫ່ງການສະແຫວງຫາ ແລະ ສ້າງສັນຕິສຸກຕາມແບບຂອງທ່ານ ອັນເປັນຄວາມມຸ່ງຫວັງຂອງຄົນທັງຫລາຍໃນໂລກ ທີ່ຢາກມີສັນຕິພາບຢ່າງຖາວອນ.

ອົງການ ຄະເວກເກີ ຮ່ວມກັບ ສະມາຄົມຮ່ວມນ້ຳໃຈ ກັບເດັກນ້ອຍລາວ (ALC) ມີຄວາມພູມໃຈ ແລະຍິນດີເປັນຢ່າງຍິ່ງ ທີ່ມີໂອກາດຈັດພິມປຶ້ມນ້ອຍຫົວນີ້ ເພື່ອມອບໃຫ້ໄວໜຸ່ມ ນັກຮຽນ ນັກສຶກສາ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ